ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 474 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.07.2021

# ດຳລັດ
# ວ່າດ້ວຍ ເຈົ້າໜ້າທີ່ລົດໄຟ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບເລກທີ 20 /ສພຊ, ລົງວັນທີ 09 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 373/ຍທຂ, ລົງວັນທີ 24 ມິຖຸນາ 2021.

ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາເຈົ້າໜ້າທີ່ລົດໄຟ ເພື່ອໃຫ້ເຄື່ອນໄຫວຢ່າງຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການຂົນສົ່ງທາງລົດໄຟ ໃຫ້ມີຄວາມສະດວກ, ວ່ອງໄວ, ໂລ່ງລ່ຽນ, ທັນສະໄໝ, ຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂະບວນ, ສະຖານີ ແລະ ແລວທາງລົດໄຟ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ເຈົ້າໜ້າທີ່ລົດໄຟ**

ເຈົ້າໜ້າທີ່ລົດໄຟ ແມ່ນຕຳຫຼວດລົດໄຟ ແລະ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດໜ້າທີ່ໃນການຄວບຄຸມ, ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂະບວນ ແລະ ສະຖານີລົດໄຟ ລວມທັງແລວທາງລົດໄຟ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຂະບວນລົດໄຟ ໝາຍເຖິງ ຍານພາຫະນະທີ່ເປັນຕູ້ເກາະກັນເປັນພວງ ຊຶ່ງຂັບເຄື່ອນດ້ວຍຫົວຈັກ, ແລ່ນໄປຕາມລາງ ເພື່ອຂົນສົ່ງໂດຍສານ ແລະ ສິນຄ້າ;

2. ແລວທາງລົດໄຟ ໝາຍເຖິງ ພື້ນທີ່ ທີ່ປະກອບດ້ວຍທາງລົດໄຟ, ອຸໂມງ, ຂົວ, ພື້ນທີ່ປ້ອງກັນຄວາມປອດໄພ, ພື້ນທີ່ສະຫງວນທາງລົດໄຟ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;

3. ອຸປະກອນເຕັກນິກສຳລັບຄວາມປອດໄພ ໝາຍເຖິງ ອຸປະກອນທີ່ນຳໃຊ້ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງທາງລົດໄຟ ເປັນຕົ້ນ ປ້າຍເຕືອນ, ປ້າຍຫ້າມ, ປ້າຍແນະນຳ, ຮົ້ວກັ້ນ, ກ້ອງວົງຈອນປິດ, ບັ້ງດັບເພີງ, ເຄື່ອງແຈ້ງເຕືອນສຸກເສີນ, ຄ້ອນທຸບ, ເຄື່ອງລະບາຍອາກາດ, ລະບົບຫ້າມລໍ້ສຸກເສີນ ແລະ ອຸປະກອນອື່ນ.

ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂອງເຈົ້າໜ້າທີ່ລົດໄຟ

ລັດ ສົ່ງເສີມ ແລະ ພັດທະນາ ເຈົ້າໜ້າທີ່ລົດໄຟ ໃຫ້ມີຄວາມຮູ້ຄວາມສາມາດ ທາງດ້ານປະລິມານ ແລະ ຄຸນນະພາບຕາມຫຼັກວິຊາການ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ໃນແຕ່ລະໄລຍະ.

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ລົດໄຟ ດ້ວຍການສະໜອງງົບປະມານ, ສະຖານທີ່ເຮັດວຽກ, ຍານພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ແລະ ສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ.

ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ລົດໄຟ

ການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ລົດໄຟ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ,ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

2. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ, ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ສອດຄ່ອງກັບສະພາບຕົວຈິງ ໃນແຕ່ລະໄລຍະໃຫ້ຈະແຈ້ງ;

3. ກະທັດຮັດ, ມີປະສິດທິພາບ, ທັນສະໄໝ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ, ພາວະວິໄສ ແລະ ສາມາດກວດກາໄດ້;

4. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບເຈົ້າໜ້າທີ່ລົດໄຟ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ລົດໄຟ ຢູ່ ສປປ ລາວ.

## ໝວດທີ 2
## ຕຳຫຼວດລົດໄຟ

**ມາດຕາ 7 ຕຳຫຼວດລົດໄຟ**

ຕຳຫຼວດລົດໄຟ ແມ່ນ ເຈົ້າໜ້າທີ່ຈາກກະຊວງປ້ອງກັນຄວາມສະຫງົບທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດໜ້າທີ່ໃນຂະບວນ, ສະຖານີ ແລະ ແລວທາງລົດໄຟໃນການຄວບຄຸມ, ຮັກສາຄວາມສະຫງົບ, ຄວາມເປັນລະບຽບ ແລະ ຄວາມປອດໄພ, ກວດກາວັດຖຸເຄື່ອງຂອງທີ່ເກືອດຫ້າມ ຫຼື ຜິດກົດໝາຍ ພ້ອມທັງແກ້ໄຂເຫດການທີ່ເກີດຂຶ້ນ.

**ມາດຕາ 8 ສິດຂອງຕຳຫຼວດລົດໄຟ**

ຕຳຫຼວດລົດໄຟມີສິດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການລົດໄຟ;

2. ກວດກາວັດຖຸເຄື່ອງຂອງ ທີ່ເກືອດຫ້າມ ຫຼື ຜິດກົດໝາຍ ພ້ອມທັງແກ້ໄຂເຫດການທີ່ເກີດຂຶ້ນ ແລະ ຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລ້ວນຳຜູ້ຖືກຈັບຕົວໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ເພື່ອປະຕິບັດຕາມກົດໝາຍ;

3. ຄຸ້ມຄອງ, ຄວບຄຸມ, ຈັດລະບຽບ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ສະຖານີ ແລະ ຂະບວນລົດໄຟ ໂດຍມີການປະສານສົມທົບ ກັບເຈົ້າໜ້າທີ່ກວດກາການແລ່ນລົດໄຟ ແລະ ພະນັກງານທີ່ກ່ຽວຂ້ອງ;

4. ກວດກາລະບົບສັນຍານ, ເຄື່ອງໝາຍ, ສິ່ງອຳນວຍຄວາມສະດວກ, ສະພາບແວດລ້ອມຂອງເສັ້ນທາງລົດໄຟ ເພື່ອສະເໜີພາກສ່ວນທີ່ກ່ຽວຂ້ອງປັບປຸງແກ້ໄຂ;

5. ຮັບ ແລະ ບັນທຶກການແຈ້ງຄວາມອາຊະຍາກຳທີ່ເກີດຂຶ້ນຢູ່ສະຖານີ, ຂະບວນລົດໄຟ ແລະ ນຳສົ່ງບົດບັນທຶກແຈ້ງຄວາມ, ຂໍ້ມູນຫຼັກຖານ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຕາມກົດໝາຍ ແລະ ລະບຽບການ;

6. ໄດ້ຮັບການປະກອບອາວຸດ ແລະ ອຸປະກອນທີ່ຈຳເປັນ ເພື່ອຮັບໃຊ້ເຂົ້າໃນວຽກງານໜ້າທີ່ຂອງຕົນ;

7. ປະສານສົມທົບ ກັບ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ, ກຳລັງປ້ອງກັນຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໜ້າທີ່ໃນການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂອາຊະຍາກຳທີ່ເກີດຂຶ້ນ ຢູ່ສະຖານີ, ຂະບວນ ແລະ ແລວທາງລົດໄຟ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ຂອງຕຳຫຼວດລົດໄຟ**

ຕຳຫຼວດລົດໄຟ ມີໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ທີ່ພົວພັນກັບວຽກງານວິຊາສະເພາະ ຂອງຕົນໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

2. ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍ ການລົດໄຟ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ສັງຄົມຮັບຮູ້, ເຂົ້າໃຈເຫັນໄດ້ຜົນເສຍຫາຍ, ໄພອັນຕະລາຍທີ່ອາດຈະເກີດຂຶ້ນຕາມຂະບວນ, ສະຖານີ ແລະ ແລວທາງລົດໄຟ;

3. ເກັບກຳ, ຄົ້ນຄວ້າ, ຊອກຫາບັນດາປັດໃຈ, ສາເຫດ, ເງື່ອນໄຂຕ່າງໆທີ່ພາໃຫ້ເກີດມີຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຢູ່ຂະບວນ, ສະຖານີ ແລະ ແລວທາງລົດໄຟ ເພື່ອຄົ້ນຄວ້າວິໄຈ, ວາງແຜນການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂໃຫ້ທັນເວລາ;

4. ອຳນວຍຄວາມສະດວກ, ຄວບຄຸມ, ຈັດລະບຽບ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ຂະບວນ, ສະຖານີ ແລະ ແລວທາງລົດໄຟ, ກວດກາວັດຖຸເຄື່ອງຂອງ ທີ່ເກືອດຫ້າມ ຫຼື ຜິດກົດໝາຍ ພ້ອມທັງແກ້ໄຂເຫດການທີ່ເກີດຂຶ້ນ;

5. ຊອກຮູ້ ແລະ ກຳແໜ້ນສະພາບຫຍໍ້ທໍ້, ອາຊະຍາກຳຢູ່ຂະບວນ, ສະຖານີ ແລະ ແລວທາງລົດໄຟ ເພື່ອວາງແຜນການ, ວິທີການ, ມາດຕະການສະກັດກັ້ນ ແລະ ແກ້ໄຂຢ່າງທັນການ;

6. ປ້ອງກັນ ແລະ ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການຊັນນະສູດ ແລະ ວັດແທກສະຖານທີ່ເກີດເຫດ, ອຸບປະຕິເຫດທາງລົດໄຟ;

7. ຮັບແຈ້ງຄວາມ ແລະ ແກ້ໄຂການກໍ່ອາຊະຍາກຳຢູ່ຂະບວນ, ສະຖານີ ແລະ ແລວທາງລົດໄຟ;

8. ປະສານສົມທົບກັບ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງຕົນ ໃຫ້ຂັ້ນເທິງ ຢ່າງທັນການ ແລະ ເປັນປົກກະຕິ;

10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງຕຳຂອງຫຼວດລົດໄຟ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງຕຳຫຼວດລົດໄຟ ຊຶ່ງຈະໄດ້ກຳນົດໃນລະບຽບການຕ່າງຫາກ.

## ໝວດທີ 3
## ເຈົ້າໜ້າທີ່ກວດກາການແລ່ນລົດໄຟ

**ມາດຕາ 11 ເຈົ້າໜ້າທີ່ກວດກາການແລ່ນລົດໄຟ**

ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ແມ່ນພະນັກງານ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ທີ່ຖືກແຕ່ງຕັ້ງ ຫຼື ມອບໝາຍ ໂດຍລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອປະຕິບັດໜ້າທີ່ ໃນການອຳນວຍຄວາມສະດວກ, ຄຸ້ມຄອງ, ກວດກາ ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂະບວນ, ສະຖານີ ແລະ ແລວທາງລົດໄຟ.

**ມາດຕາ 12 ສິດ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟ**

ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ມີສິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາ ເອກະສານຂອງຜູ້ໂດຍສານ, ເຄື່ອງຝາກທາງໄປສະນີ, ເຄື່ອງທີ່ຜິດກົດໝາຍ ຫຼື ເຄື່ອງທີ່ເກືອດຫ້າມ ແລະ ສິນຄ້າໃນສະຖານີ ແລະ ຂະບວນລົດໄຟ;

2. ປະສານສົມທົບກັບຕຳຫຼວດລົດໄຟ, ກຳລັງປ້ອງກັນຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເມື່ອມີອຸບປະຕິເຫດ ຫຼື ເຫດການທີ່ເປັນໄພຂົ່ມຂູ່ຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງຜູ້ໂດຍສານ ແລະ ການລົດໄຟ;

3. ປະສານສົມທົບກັບຕຳຫຼວດລົດໄຟ ເພື່ອກວດກາເອກະສານຂອງຜູ້ໂດຍສານ ແລະ ສິນຄ້າ ທີ່ສົງໄສ ຫຼື ເຫັນວ່າບໍ່ຖືກຕ້ອງ ຕາມລະບຽບການຂົນສົ່ງທາງລົດໄຟ;

4. ນຳໃຊ້ມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ປັບໃໝບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຂົນສົ່ງທາງລົດໄຟ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟ**

ເຈົ້າໜ້າທີ່ກວດກາການແລ່ນລົດໄຟມີໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ທີ່ພົວພັນກັບວຽກງານ ຂອງຕົນໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

2. ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍ ການລົດໄຟ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ສັງຄົມຮັບຮູ້, ເຂົ້າໃຈ, ເຫັນໄດ້ຜົນເສຍຫາຍ, ໄພອັນຕະລາຍທີ່ອາດຈະເກີດຂຶ້ນຕາມຂະບວນ, ສະຖານີ ແລະ ແລວທາງລົດໄຟ;

3. ກວດກາ ຄວາມເປັນລະບຽບຮຽບຮ້ອຍ, ສຸຂານາໄມ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃນ ສະຖານີ ແລະ ຂະບວນລົດໄຟ;

4. ກວດກາເອກະສານທາງດ້ານເຕັກນິກຕາມປຶ້ມຄູ່ມື ແລະ ລະບຽບການແລ່ນລົດໄຟເຊັ່ນ ຕາຕະລາງບັນທຶກການແລ່ນລົດໄຟ,ໃບອະນຸຍາດເຂົ້າ-ອອກສະຖານີ,ໃບກວດກາເຕັກນິກລົດໄຟ, ໃບຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນ,ໃບອະນຸຍາດສັບປ່ຽນ ລາງ, ຕູ້ລົດໄຟ,ໃບລະຫັດຕູ້ສິນຄ້າ, ໃບຢັ້ງຢືນລະບົບໄຟສັນຍານ ແລະ ສື່ສານ;

5. ກວດກາ ລະບົບສັນຍານ, ລະບົບສື່ສານ ແລະ ອຸປະກອນເຕັກນິກສຳລັບຄວາມປອດໄພ ແລະ ສິ່ງອຳນວຍຄວາມສະດວກອື່ນ ຢູ່ໃນ ຂະບວນ, ສະຖານີ ແລະ ຕາມແລວທາງລົດໄຟ;

6. ປະສານສົມທົບກັບຕຳຫຼວດລົດໄຟ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການແກ້ໄຂບັນຫາທີ່ເກີດຂຶ້ນ ຕາມຂະບວນ, ສະຖານີ ແລະ ແລວທາງລົດໄຟຢ່າງທັນການ ພ້ອມທັງຊອກຫາສາເຫດ ແລະ ແກ້ໄຂອຸບປະຕິເຫດ ແລະ ປະກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນ;

7. ປະສານສົມທົບກັບຕຳຫຼວດລົດໄຟ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ ຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

8. ສະຫຼຸບ ແລະ ລາຍງານ ກ່ຽວກັບການເຄື່ອນໄຫວວຽກງານ ຂອງຕົນ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ການຈັດຕັ້ງເຈົ້າໜ້າທີ່ກວດກາການແລ່ນລົດໄຟ**

ການຈັດຕັ້ງເຈົ້າໜ້າທີ່ກວດກາການແລ່ນລົດໄຟ ມີດັ່ງນີ້:

1. ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ກົມທາງລົດໄຟ, ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ;

3. ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ.

**ມາດຕາ 15 ໂຄງປະກອບບຸກຄະລາກອນຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟ**

ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ແຕ່ລະຂັ້ນ ປະກອບມີ ຫົວໜ້າ, ຮອງຫົວໜ້າ ແລະ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ຈຳນວນໜຶ່ງ.

ຫົວໜ້າເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ກົມທາງລົດໄຟ ແມ່ນຮອງຫົວໜ້າກົມທາງລົດໄຟ.

ຫົວໜ້າເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ແມ່ນພະນັກງານທີ່ມີຕຳແໜ່ງບໍລິຫານປະເພດ ສີ່.

ຫົວໜ້າເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ສັງກັດຢູ່ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ ແມ່ນພະນັກງານທີ່ມີຕຳແໜ່ງບໍລິຫານປະເພດ ຫ້າ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ລວມທັງສິດ ແລະ ໜ້າທີ່ລະອຽດ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟ ຢູ່ແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ, ບໍ່ໃຫ້ການຮ່ວມມື ຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລົດໄຟ;
2. ສວຍໃຊ້, ແອບອ້າງ ແລະ ປອມແປງ ເປັນເຈົ້າໜ້າທີ່ລົດໄຟ;
3. ແຈ້ງ ຫຼື ລາຍງານຂໍ້ມູນເທັດໃຫ້ເຈົ້າໜ້າທີ່ລົດໄຟ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 17 ຂໍ້ຫ້າມສຳລັບເຈົ້າໜ້າທີ່ລົດໄຟ**

ຫ້າມ ເຈົ້າໜ້າທີ່ລົດໄຟ ມີພຶດຕິກຳ ດັ່ງນີ້:

1. ປະລະໜ້າທີ່, ເມີນເສີຍ, ບໍ່ປະຕິບັດຕາມຄຳສັ່ງ ຂອງຂັ້ນເທິງ;
2. ຮຽກ, ຮັບສິນບົນ, ສວຍໃຊ້ສິດອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຊອກຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;
3. ໃຊ້ສິດ, ໜ້າທີ່ຕຳແໜ່ງ ເກີນຂອບເຂດຄວາມຮັບຜິດຊອບ ຂອງຕົນ;
4. ໃຊ້ກິລິຍາ, ມາລະຍາດທີ່ບໍ່ເໝາະສົມ ໃນການປະຕິບັດໜ້າທີ່;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາເຈົ້າໜ້າທີ່ລົດໄຟ

**ມາດຕາ 18 ອົງການຄຸ້ມຄອງ ແລະ ກວດກາເຈົ້າໜ້າທີ່ລົດໄຟ**

ອົງການຄຸ້ມຄອງ ແລະ ກວດກາເຈົ້າໜ້າທີ່ລົດໄຟປະກອບດ້ວຍ:

1. ຂະແໜງການປ້ອງກັນຄວາມສະຫງົບ;
2. ຂະແໜງການໂຍທາທິການແລະຂົນສົ່ງ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງຕຳຫຼວດລົດໄຟ ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ດັ່ງນີ້:

1. ສະເໜີ ສ້າງ ຫຼື ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບຕຳຫຼວດລົດໄຟຕໍ່ຂັ້ນເທິງ;

2. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບຕຳຫຼວດລົດໄຟ;

3. ໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມ ກົດໝາຍ ແລະ ລະບຽບການ ກ່ຽວກັບຕຳຫຼວດລົດໄຟ;

4. ຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມ ກວດກາ ເຫຼົ່າວິຊາສະເພາະຕຳຫຼວດລົດໄຟທີ່ຂຶ້ນກັບຕົນ;

5. ປັບປຸງ, ກໍ່ສ້າງ, ບຳລຸງ, ຝຶກອົບຮົມ ແລະ ພັດທະນາຕຳຫຼວດລົດໄຟ ໃຫ້ເຕີບໃຫຍ່ເຂັ້ມແຂງຮອບດ້ານ;

6. ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຍານພາຫະນະ, ອາວຸດຍຸດໂທປະກອນ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ, ໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ຕຳຫຼວດລົດໄຟ;

7. ແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃຫ້ການຮ່ວມມື ພ້ອມທັງສະໜອງຂໍ້ມູນຂ່າວສານ ທີ່ຈຳເປັນ ໃຫ້ແກ່ຕຳຫຼວດລົດໄຟ;

8. ປະສານສົມທົບກັບ ຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານ ຂອງຕຳຫຼວດລົດໄຟ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບຕຳຫຼວດລົດໄຟ;

10. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງຕຳຫຼວດລົດໄຟ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 ສິດແລະ ໜ້າທີ່ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີ ສ້າງ ຫຼື ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບເຈົ້າໜ້າທີ່ກວດກາການແລ່ນລົດໄຟ ຕໍ່ຂັ້ນເທິງ;

2. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

3. ໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມກົດໝາຍ ແລະ ລະບຽບການ ກ່ຽວກັບເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ຂຶ້ນກັບຕົນ;

5. ປັບປຸງ, ກໍ່ສ້າງ, ບຳລຸງ, ຝຶກອົບຮົມ ແລະ ພັດທະນາເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

6. ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຍານພາຫະນະ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

7. ປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟໃຫ້ມີປະສິດທິພາບແລະ ປະສິດທິຜົນສູງ;

8. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ເນື້ອໃນການກວດກາ**

ການກວດກາວຽກງານ ຂອງເຈົ້າໜ້າທີ່ລົດໄຟ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂອງເຈົ້າໜ້າທີ່ລົດໄຟ;
2. ການປະຕິບັດ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລົດໄຟ;
3. ການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ເຈົ້າໜ້າທີ່ລົດໄຟ.

**ມາດຕາ 22 ຮູບການການກວດກາ**

ການກວດກາວຽກງານເຈົ້າໜ້າທີ່ລົດໄຟ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ມີລັກສະນະປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

# ໝວດທີ 6
## ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍ

**ມາດຕາ 23 ງົບປະມານ**

ງົບປະມານທີ່ນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຂອງຕໍາຫຼວດລົດໄຟ ໃຫ້ນໍາໃຊ້ງົບປະມານ ຂອງກະຊວງປ້ອງກັນຄວາມສະຫງົບ.

ງົບປະມານທີ່ນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ກວດກາການແລ່ນລົດໄຟ ໃຫ້ນໍາໃຊ້ງົບປະມານ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ການນໍາໃຊ້ງົບປະມານດັ່ງກ່າວ ຕ້ອງສອດຄ່ອງກັບ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 24 ເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍ ຂອງເຈົ້າໜ້າທີ່ລົດໄຟ**

ຕໍາຫຼວດລົດໄຟ ມີເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍສະເພາະ ຂອງຕົນ ຊຶ່ງກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກໍານົດ.

ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ມີເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍສະເພາະ ຂອງຕົນ ຊຶ່ງກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກໍານົດ.

ເຈົ້າໜ້າທີ່ລົດໄຟ ຕ້ອງນຸ່ງເຄື່ອງແບບ, ຖືບັດປະຈໍາການ ຫຼື ປະຈໍາໜ້າທີ່ ແລະ ຕິດເຄື່ອງໝາຍ, ກາໝາຍສະເພາະ ໃນເວລາປະຈໍາການ ຫຼື ປະຕິບັດໜ້າທີ່ທາງລັດຖະການ.

# ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຈະຖືກລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

# ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ